ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ 190 /ກຕສ
ນະຄອນຫຼວງວຽງຈັນ, ວັນທີ 02 ກຸມພາ 2022.

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງ ກົມຄວາມປອດໄພໄຊເບີ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ສະບັບເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ການຄົ້ນຄວ້າສະເໜີຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 064/ກຈງ, ລົງວັນທີ 25 ມັງກອນ 2022.

## ລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄວາມປອດໄພໄຊເບີ, ແນໃສ່ຈັດຕັ້ງປະຕິບັດວຽກງານຂອງກົມຄວາມປອດໄພທາງໄຊເບີ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມຄວາມປອດໄພໄຊເບີ ຕົວອັກສອນຫຍໍ້ "ກຄຊ" ຂຽນເປັນພາສາສາກົນ "Department of Cyber Security" ຂຽນຫຍໍ້ "DCS" ແມ່ນໂຄງປະກອບກົງຈັກການຈັດຕັ້ງ ຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງ ໃນການຄຸ້ມຄອງວຽກງານຄວາມປອດໄພທາງໄຊເບີ, ວຽກງານການປົກປ້ອງເດັກ ໃນການນຳໃຊ້ອິນເຕີເນັດ ແລະ ວຽກງານວິໄຈຂໍ້ມູນຂ່າວສານຂໍ້ມູນຂ່າວສານຜ່ານອິນເຕີເນັດ ໃນຂອບເຂດທົ່ວປະເທດ.



໑.

# ໝວດທີ 2
# ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມຄວາມປອດໄພໄຊເບີ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
2. ຄົ້ນຄວ້າ, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບ ວຽກງານຄວາມປອດໄພທາງໄຊເບີ, ວຽກງານການປົກປ້ອງເດັກ ໃນການນຳໃຊ້ອິນເຕີເນັດ ແລະ ວຽກງານວິໃຈຂໍ້ມູນຂ່າວສານຂໍ້ມູນຂ່າວສານຜ່ານອິນເຕີເນັດ;
3. ສ້າງຮ່າງແຜນຍຸດທະສາດ ແລະ ນະໂຍບາຍ ທີ່ກ່ຽວກັບ ວຽກງານຄວາມປອດໄພທາງໄຊເບີ, ວຽກງານປົກປ້ອງເດັກໃນການນຳໃຊ້ອິນເຕີເນັດ, ວຽກງານການວິໃຈຂໍ້ມູນຂ່າວສານຜ່ານອິນເຕີນັດ; ສ້າງແຜນງານ, ແຜນການ ແລະ ໂຄງການ ເພື່ອສະເໜີລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານພິຈາລະນາຮັບຮອງ ແລະ ອະນຸມັດ ພ້ອມທັງຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
4. ຄົ້ນຄວ້າ ສ້າງ ແລະ ປັບປຸງ ບັນດານິຕິກຳ ທີ່ກ່ຽວຂ້ອງ ກັບ ວຽກງານຄວາມປອດໄພທາງໄຊເບີ, ການປົກປ້ອງເດັກ ໃນການນຳໃຊ້ອິນເຕີເນັດ, ການວິໃຈຂໍ້ມູນຂ່າວສານຜ່ານອິນເຕີນັດ ໃຫ້ແທດເໝາະກັບສະພາບຕົວຈິງ ໃນແຕ່ລະໄລຍະ;
5. ເຝົ້າລະວັງ, ຕິດຕາມ, ກວດກາ, ວິເຄາະ, ປະເມີນຄວາມສ່ຽງ ແລະ ແກ້ໄຂເຫດສຸກເສີນທາງໄຊເບີ;
6. ກວດກາ ແລະ ຢັ້ງຢືນເຕັກນິກ ດ້ານຄວາມປອດໄພໃນການນຳໃຊ້ ບັນດາອຸປະກອນ ສື່ສານເອເລັກໂຕຣນິກ ທີ່ຈະນຳເຂົ້າ ສປປ ລາວ;
7. ຄຸ້ມຄອງ ແລະ ປະເມີນມາດຕະຖານຄວາມປອດໄພ ຂອງລະບົບການບໍລິຫານຈັດການຂໍ້ມູນຂ່າວສານ Information Security Management System (ISMS);
8. ສ້າງກິດຈະກຳ, ເຜີຍແຜ່ນິຕິກຳ, ໂຄສະນາ ແລະ ຝຶກອົບຮົມ ທາງດ້ານເຕັກນິກວິຊາການ ກ່ຽວກັບ ວຽກງານຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນຳໃຊ້ອິນເຕີເນັດ;
9. ຮັບແຈ້ງເຫດ, ແຈ້ງເຕືອນ, ໃຫ້ຄຳປຶກສາ ແລະ ແນະນຳວິທີປ້ອງກັນ ກ່ຽວກັບ ຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນຳໃຊ້ອິນເຕີເນັດ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂ;
10. ຄົ້ນຫາ, ສະໜອງຂໍ້ມູນ, ຢັ້ງຢືນຂໍ້ມູນຫຼັກຖານການກະທຳຜິດທາງໄຊເບີ ແລະ ວິໃຈຂໍ້ມູນຂ່າວສານຜ່ານອິນເຕີນັດ ເພື່ອໃຫ້ພາກສ່ວນທີ່ກ່ຽວ ຂ້ອງດຳເນີນຄະດີຕາມລະບຽບກົດໝາຍ;
11. ຄົ້ນຄວ້າ, ພັດທະນາການນຳໃຊ້ ຊອບແວ, ຮາດແວ ແລະ ລະບົບເຕັກໂນໂລຊີ ກ່ຽວກັບ ຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນຳໃຊ້ອິນເຕີເນັດ;
12. ຄົ້ນຄວ້າ ແລະ ປະສານສົມທົບກັບຂະແໜງການ ທີ່ກ່ຽວຂ້ອງ ໃນການສ້າງ ແລະ ພັດທະນາ ຫຼັກສູດຝຶກອົບ ຮົມ ໃຫ້ຄວາມຮູ້ດ້ານຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນຳໃຊ້ອິນເຕີເນັດ;
13. ຕິດຕາມ, ກວດກາ, ເກັບກຳ, ສັງລວມ ແລະ ລາຍງານ ການນຳໃຊ້ຂໍ້ມູນ-ຂ່າວສານ ຜ່ານອິນເຕີເນັດທີ່ຂັດກັບກົດໝາຍ ແລະ ລະບຽບການ;
14. ພົວພັນ, ຮ່ວມມືກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ, ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນຳໃຊ້ອິນເຕີເນັດ ຕາມການເຫັນດີຂອງ ຄະນະນຳກະຊວງ;
15. ເກັບກຳ ແລະ ສັງລວມ ສະຖິຕິຕ່າງໆ ກ່ຽວກັບ ຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນຳໃຊ້ອິນເຕີເນັດ ທີ່ເກີດຂຶ້ນທັງພາຍໃນ ແລະ ຕ່າງປະເທດ ໃນແຕ່ລະໄລຍະ;



ອ.

16. ຄຸ້ມຄອງການຈັດຕັ້ງ, ພະນັກງານ, ຂຶ້ນແຜນບໍາລຸງກໍ່ສ້າງ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ;
17. ສະຫຼຸບ, ລາຍງານ ວຽກງານຂອງກົມຄວາມປອດໄພໄຊເບີ ໃຫ້ລັດຖະມົນຕີຊາບ ແລະ ເພື່ອຊີ້ນໍາ;
18. ສ້າງແຜນການເຄື່ອນໄຫວວຽກງານ ປະຈໍາເດືອນ, ປະຈໍາໄຕມາດ, ປະຈໍາປີ, ກາງສະໄໝ ແລະ ທ້າຍສະໄໝ ເພື່ອສະເໜີຕໍ່ ຄະນະນໍາກະຊວງ;
19. ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນນິຕິກໍາອື່ນ ແລະ ການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີຜູ້ຊີ້ນໍາ.

**ມາດຕາ 4 ຂອບເຂດສິດ**

ກົມຄວາມປອດໄພໄຊເບີ ມີສິດ ດັ່ງນີ້:

1. ສະເໜີສ້າງ, ປັບປຸງ ຫຼື ລົບລ້າງ ນິຕິກໍາທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນໍາໃຊ້ອິນເຕີເນັດ ໃຫ້ຂັ້ນເທິງພິຈາລະນາ;
2. ສະເໜີແຜນການ, ແຜນງານໂຄງການ ກ່ຽວກັບ ວຽກງານຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນໍາໃຊ້ອິນເຕີເນັດ ໃຫ້ແທດເໝາະກັບການພັດທະນາ ເສດຖະກິດດິຈິຕ໋ອນ ແຫ່ງຊາດ ຕາມແຕ່ລະໄລຍະ;
3. ນໍາໃຊ້ໂລໂກ ລາວເຊີດ “LaoCERT” ເຂົ້າໃນວຽກງານການສ້າງກິດຈະກໍາ, ການເຜີຍແຜ່ຂໍ້ມູນຂ່າວສານ, ການໃຫ້ຄວາມຮູ້, ການພົວພັນ, ການແຈ້ງເຕືອນ ແລະ ຕອບໂຕ້ເຫດສຸກເສີນ ທີ່ເກີດຂຶ້ນກັບລະບົບຄອມພິວເຕີ;
4. ເຂົ້າເປັນສະມາຊິກຂອງ ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນໍາໃຊ້ອິນເຕີເນັດ ຕາມການເຫັນດີຂອງ ຄະນະນໍາກະຊວງ;
5. ສະເໜີເຂົ້າຮ່ວມປະຊຸມ, ສໍາມະນາ, ຝຶກອົບຮົມໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນໍາໃຊ້ອິນເຕີເນັດ;
6. ສະເໜີ ສ້າງຕັ້ງ, ປັບປຸງ, ຍຸບເລີກກົງຈັກການຈັດຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ ແລະ ຊັບຊ້ອນ ພະນັກງານຂອງກົມ ຕາມສະພາບ ເພື່ອໃຫ້ສອດຄ່ອງກັບ ວຽກງານຄວາມປອດໄພທາງໄຊເບີ ຕາມແຕ່ລະໄລຍະ;
7. ສະເໜີ ນະໂຍບາຍ, ເລື່ອນຊັ້ນ-ຂັ້ນ, ບໍາລຸງ, ກໍ່ສ້າງ ພະນັກງານ ແລະ ປະຕິບັດວິໄນ ຕາມລະບຽບການ;
8. ກວດກາ, ຄົ້ນຫາ, ພິສູດ ແລະ ຢັ້ງຢືນຂໍ້ມູນ ທາງລະບົບເອເລັກໂຕຣນິກ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຕາມການສະເໜີ;
9. ອອກໃບອະນຸຍາດ ດ້ານຄວາມປອດໄພ ໃນການນໍາໃຊ້ ບັນດາອຸປະກອນສື່ສານເອເລັກໂຕຣນິກ ທີ່ຈະນໍາເຂົ້າ ສປປ ລາວ;
10. ປະເມີນມາດຕະຖານຄວາມປອດໄພ ຂອງລະບົບການບໍລິຫານຈັດການຂໍ້ມູນຂ່າວສານ Information Security Management System (ISMS);
11. ເຊັນສັນຍາການຮ່ວມມື ກັບອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບ ວຽກງານຄວາມປອດໄພທາງໄຊເບີ ແລະ ການປົກປ້ອງເດັກ ໃນການນໍາໃຊ້ອິນເຕີເນັດ;
12. ສະເໜີຈັດກອງປະຊຸມ, ສໍາມະນາ, ແລກປ່ຽນ ຂໍ້ມູນ-ຂ່າວສານ ແລະ ຝຶກອົບຮົມ, ຝຶກຊ້ອມຮັບມື ຕົວຈິງ ກ່ຽວກັບ ວຽກງານຄວາມປອດໄພທາງໄຊເບີ, ການປົກປ້ອງເດັກ ໃນການນໍາໃຊ້ອິນເຕີເນັດ ທັງພາຍໃນ ແລະ ຕ່າງປະເທດ;
13. ຄຸ້ມຄອງ, ນໍາໃຊ້ຊັບສິນ ແລະ ງົບປະມານ ຕາມການອະນຸມັດຂອງກະຊວງ;
14. ປະຕິບັດສິດອື່ນ ຕາມທີ່ກໍານົດໄວ້ໃນນິຕິກໍາອື່ນ ແລະ ການມອບໝາຍຂອງ ລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນໍາ.

ອ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກົມຄວາມປອດໄພໄຊເບີ ມີໂຄງປະກອບກົງຈັກ ດັ່ງລຸ່ມນີ້:

1. ພະແນກ ສັງລວມ (General Afairs Division);
2. ພະແນກ ຄົ້ນຄ້ວາ ແລະ ພັດທະນາ (Research and Development Division);
3. ພະແນກ ຮ່ວມມືຄວາມປອດໄພໄຊເບີ (Cybersecurity Cooperation Division);
4. ພະແນກ ຕອບໂຕ້ເຫດສຸກເສີນທາງຄອມພິວເຕີ (LaoCERT Division);
5. ພະແນກ ວິໄຈຂໍ້ມູນຂ່າວສານ ຜ່ານອິນເຕີເນັດ (Content Analysis Division).

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ກົມຄວາມປອດໄພໄຊເບີ ມີໂຄງປະກອບບຸກຄະລາກອນ ດັ່ງລຸ່ມນີ້:

1. ຫົວໜ້າກົມຄວາມປອດໄພໄຊເບີ ຈຳນວນ 01 ທ່ານ, ຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີຜູ້ຊີ້ນຳວຽກງານ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານຂອງກົມ.

   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດໜຶ່ງ ຮັກສາການແທນ;
2. ຮອງຫົວໜ້າກົມຄວາມປອດໄພໄຊເບີ ຈຳນວນໜຶ່ງ ຊ່ວຍຫົວໜ້າກົມ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານ ທີ່ຕົນຊີ້ນຳ;

   ຮອງຫົວໜ້າກົມ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ.
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ຂອງພະແນກ ສັງລວມ (General Afairs Division)**

ພະແນກ ສັງລວມ ມີໜ້າທີ່ ດັ່ງນີ້:

1. ສັງລວມບັນດາກົດໝາຍ, ດຳລັດ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ ແລະ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
2. ສັງລວມ, ເກັບກຳ ແລະ ສະເໜີດັດແກ້ ຊັ້ນ-ຂັ້ນເງິນເດືອນ, ຄິດໄລ່ແຮງງານ ຂອງ ພະນັກງານ-ລັດຖະກອນພາຍໃນກົມ;
3. ຄຸ້ມຄອງ, ສັງລວມ ຊີວະປະຫວັດ ພະນັກງານ-ລັດຖະກອນ ຂອງກົມ;
4. ສັງລວມ ແລະ ເກັບກຳການເຄື່ອນໄຫວວຽກງານຂອງກົມໃນແຕ່ລະໄລຍະ;
5. ຄົ້ນຄວ້າ ການປະຕິບັດນະໂຍບາຍຕ່າງໆ ການຈັດຊັ້ນ-ຂັ້ນເງິນເດືອນ ແລະ ການປະຕິບັດ ລະບຽບວິໄນ ຂອງ ພະນັກງານ-ລັດຖະກອນ ຂອງ ກົມ;



ອ.

6. ສະເໜີດັດແກ້ ຊັ້ນ-ຂັ້ນ ເງິນເດືອນ, ຄິດໄລ່ແຮງງານ ຂອງ ພະນັກງານ-ລັດຖະກອນ ພາຍໃນກົມ;
7. ຄຸ້ມຄອງ, ສັງລວມ, ສຳເນົາ, ກວດກາ ແລະ ແຈກຢາຍເອກະສານແບບເຈ້ຍ ແລະ ແບບເອເລັກໂຕຼນິກ ວຽກງານຂາເຂົ້າ-ຂາອອກ ຂອງກົມ;
8. ເປັນໃຈກາງ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານ ຂອງກົມຢ່າງ ມີປະສິດທິຜົນດີ;
9. ຂຶ້ນແຜນ, ຕິດຕາມ, ກວດກາ, ສະຫລຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຄື່ອນໄຫວ ຂອງກົມປະຈຳອາທິດ, ເດືອນ, 03 ເດືອນ, 06 ເດືອນ ແລະ ປະຈຳປີ ຂອງກົມ;
10. ຄົ້ນຄ້ວາ, ຄຸ້ມຄອງ ແລະ ກວດກາເອກະສານ ເພື່ອຂໍຄຳເຫັນຄະນະກົມ;
11. ເຜີຍແຜ່ເອກະສານ, ນິຕິກຳ ແລະ ລະບຽບຕ່າງໆ ທີ່ກ່ຽວຂ້ອງໃນແຕ່ລະໄລຍະໃຫ້ພະນັກງານ-ລັດຖະກອນພາຍໃນກົມ;
12. ກະກຽມກອງປະຊຸມຕ່າງໆ ວຽກງານພິທີການ ແລະ ເຮັດບົດບັນທຶກກອງປະຊຸມ ຂອງກົມ;
13. ຂຶ້ນແຜນບຳລຸງກໍ່ສ້າງພະນັກງານ ຂອງກົມ ໃນແຕ່ລະໄລຍະ;
14. ຄຸ້ມຄອງອຸປະກອນຮັບໃຊ້, ພາຫະນະ, ຊັບສິນລວມ ແລະ ງົບປະມານຂອງກົມ ຕາມການອະນຸມັດ ຂອງ ກະ ຊວງ;
15. ສົມທົບກັບບັນດາພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຊື້ເຄື່ອງໃຊ້ຫ້ອງການ ແລະ ວັດຖຸອຸປະກອນວິຊາສະເພາະ ຂອງກົມ;
16. ຄົ້ນຄວ້າ ແລະ ເກັບກຳສະຖິຕິ ວຽກງານເຂົ້າຮ່ວມຝຶກອົບຮົມ ແລະ ສຳມະນາຕ່າງໆ ຢູ່ ພາຍໃນ ແລະ ຕ່າງປະເທດ;
17. ເຂົ້າຮ່ວມ ຝຶກອົບຮົມ, ກອງປະຊຸມ ສຳມະນາຕ່າງໆ ດ້ານວິຊາການ ຢູ່ພາຍໃນ ແລະ ຕ່າງປະເທດ;
18. ເຂົ້າຮ່ວມໃນການສ້າງ ແລະ ປັບປຸງ ບັນດານິຕິກຳ ທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພໄຊເບີ;
19. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 8 ໜ້າທີ່ຂອງພະແນກ ຄົ້ນຄ້ວາ ແລະ ພັດທະນາ** (Research and Development Division)

ພະແນກ ຄົ້ນຄ້ວາ ແລະ ພັດທະນາ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນິຕິກຳລຸ່ມກົດໝາຍ ທີ່ກ່ຽວຂ້ອງກັບ ນະວັດຕະກຳ ເຕັກໂນໂລຊີສື່ສານ ແລະ ຂໍ້ມູນ-ຂ່າວສານ;
2. ຄົ້ນຄວ້າ, ວິໄຈ, ທົດລອງ ແລະ ປະເມີນຜົນກະທົບຂອງ ໂປຣແກຣມປະສົງຮ້າຍ ແລະ ຊ່ອງໂຫວ່ຕ່າງໆ ທີ່ມີຜົນກະທົບ ທາງລະບົບຄອມພິວເຕີ;
3. ຄົ້ນຄວ້າ ບັນດານະວັດຕະກຳ ເຕັກໂນໂລຊີສື່ສານ ແລະ ຂໍ້ມູນ-ຂ່າວສານ ກ່ຽວກັບ ຄວາມປອດໄພທາງໄຊເບີ ເພື່ອເຜີຍແຜ່ຄວາມຮູ້ໃຫ້ສັງຄົມ;
4. ຄົ້ນຄວ້າ, ສ້າງ, ພັດທະນາ ແລະ ປັບປຸງ ເວັບເຊີເວີ ແລະ ເມວເຊີເວີ ຂອງກົມ;
5. ຄົ້ນຄວ້າ, ສ້າງ ສະຕິກເກີ, ແຜ່ນໂຄສະນາ, ສື່ສິ່ງພິມ, ວີດີໂອ ແລະ ປຶ້ມຄູ່ມື ກ່ຽວກັບ ວຽກງານຮັກສາຄວາມປອດໄພທາງໄຊເບີ;
6. ຄົ້ນຄວ້າ, ສ້າງ ປຶ້ມຄູ່ມື ໃນການນຳໃຊ້ ຄອມພິວເຕີ ໃຫ້ມີຄວາມປອດໄພ;
7. ຄົ້ນຄວ້າ, ອອກແບບ, ສ້າງ ແລະ ພັດທະນາໂປຣແກຣມ ແລະ ແອັບພີເຄຊັນ ກ່ຽວກັບ ວຽກງານຮັກສາຄວາມປອດໄພທາງໄຊເບີ;
8. ຄົ້ນຄວ້າ ແລະ ພັດທະນາ ລະບົບເຕັກໂນໂລຊີສະເພາະ ດ້ານຄວາມປອດໄພທາງໄຊເບີ;
9. ຄຸ້ມຄອງ, ຕິດຕາມ, ກວດກາ, ບຳລຸງຮັກສາ ແລະ ການນຳໃຊ້ ຫ້ອງທົດລອງ ຂອງກົມ;
10. ສ້າງເປັນປຶ້ມ ສະຖິຕິ ການບຸກລຸກ ໂຈມຕີ ທາງໄຊເບີ ຢູ່ ພາຍໃນປະເທດ ປະຈຳປີ;
11. ສະຫຼຸບການເຄື່ອນໄຫວວຽກງານຂອງພະແນກ ປະຈຳເດືອນ, ງວດ ແລະ ປີ;

12. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 9 ໜ້າທີ່ຂອງພະແນກ ຮ່ວມມືຄວາມປອດໄພໄຊເບີ** (Cybersecurity Cooperation Division)

ພະແນກ ຮ່ວມມືຄວາມປອດໄພໄຊເບີ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປະສານງານ, ພົວພັນ, ຮ່ວມມື, ຮ່າງສັນຍາ, ບົດບັນທຶກການຮ່ວມມື ແລະ ຂໍ້ຜູກພັນຕ່າງໆ ຮ່ວມກັບ ບັນດາອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຕາມການເຫັນດີ ຂອງຄະນະກົມ;
2. ຄົ້ນຄວ້າ, ນຳສະເໜີ ສ້າງບັນດາໂຄງການລົງທຶນລັດ, ໂຄງການກູ້ຢືມ ແລະ ໂຄງການຊ່ວຍເຫຼືອ ຈາກ ພາຍໃນ, ພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພທາງໄຊເບີ ໂດຍຜ່ານການ ເຫັນດີຂອງ ກົມແຜນການ ແລະ ການເງິນ;
3. ຄົ້ນຄວ້າ ປະກອບຄຳເຫັນ ກ່ຽວກັບ ເອກະສານ ຂອງພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງກັບຄວາມ ປອດໄພທາງໄຊເບີ;
4. ເປັນໃຈກາງໃນການສ້າງ ບົດນຳສະເໜີການພັດທະນາ ວຽກງານຄວາມປອດໄພທາງໄຊເບີ ຂອງກົມ ເພື່ອເຜີຍແຜ່ໃຫ້ ອົງການຈັດຕັ້ງ ພາຍໃນ, ພາກພື້ນ ແລະ ສາກົນ;
5. ພົວພັນ ກັບພາກສ່ວນກ່ຽວຂ້ອງທັງ ພາຍໃນ, ພາກພື້ນ ແລະ ສາກົນ ເພື່ອສະເໜີ ນຳສົ່ງ ພະນັກງານ ເຂົ້າຮ່ວມກອງປະຊຸມ;
6. ປະສານງານ ກັບ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ນຳສົ່ງເອກະສານ ການເຂົ້າ ຮ່ວມຝຶກອົບຮົມ, ສຳມະນາ ແລະ ຂໍ້ມູນການບຸກລຸກທາງໄຊເບີ ເພື່ອໃຫ້ ພະແນກທີ່ກ່ຽວຂ້ອງ ດຳເນີນ ການຕໍ່;
7. ຄົ້ນຄວ້າ, ກະກຽມເນື້ອໃນເອກະສານຕ່າງໆ ໃຫ້ຄະນະນຳກະຊວງ, ຄະນະກົມ ເພື່ອເປັນຂໍ້ມູນ ໃນການ ເຂົ້າຮ່ວມກອງປະຊຸມ ພາຍໃນ, ພາກພື້ນ ແລະ ສາກົນ ດ້ານວຽກງານຄວາມປອດໄພທາງໄຊເບີ;
8. ສະຫຼຸບສັງລວມວຽກງານຮ່ວມມື ພາຍໃນ, ພາກພື້ນ ແລະ ສາກົນ ດ້ານວຽກງານຄວາມປອດໄພທາງ ໄຊເບີ;
9. ຄົ້ນຄວ້າ, ສະເໜີການຊ່ວຍເຫຼືອ ການສ້າງຄວາມອາດສາມາດ ບຸກຄະລາກອນ ດ້ານຄວາມປອດໄພ ທາງໄຊເບີ ນຳອົງການຈັດຕັ້ງ ທັງພາຍໃນ, ພາກພື້ນ ແລະ ສາກົນ;
10. ຄົ້ນຄວ້າສ້າງນະໂຍບາຍ, ແຜນຍຸດທະສາດ, ໂຄງການ ແລະ ແຜນງານອັນລະອຽດຂອງກົມ ເພື່ອໃຫ້ ສອດຄ່ອງ ກັບ ແຜນພັດທະນາ ເສດຖະກິດດິຈິຕອນ ໃນແຕ່ລະໄລຍະ;
11. ສັງລວມ, ລາຍງານ, ແຜນການ, ແຜນງານ, ໂຄງການ ແລະ ການຮ່ວມມືຕ່າງໆ ຂອງກົມ ໃຫ້ ພາກສ່ວນທີ່ກ່ຽວຂ້ອງ ຕາມແຕ່ລະໄລຍະ;
12. ສະຫຼຸບການຈັດຕັ້ງປະຕິບັດ ແຜນຍຸດທະສາດການພັດທະນາ ຂະແໜງເຕັກໂນໂລຊີ ແລະ ການສື່ສານ ປະ ຈຳງວດ (03 ເດືອນ, 06 ເດືອນ, 09 ເດືອນ), ປີ, ກາງສະໄໝ ແລະ ແຜນການທ້າຍສະໄໝ (05 ປີ);
13. ສະຫຼຸບການເຄື່ອນໄຫວວຽກງານຂອງພະແນກ ປະຈຳເດືອນ, ງວດ ແລະ ປີ;
14. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 10 ໜ້າທີ່ຂອງພະແນກ ຕອບໂຕ້ເຫດສຸກເສີນທາງຄອມພິວເຕີ** (LaoCERT Division)

ພະແນກ ຕອບໂຕ້ເຫດສຸກເສີນທາງຄອມພິວເຕີ ມີໜ້າທີ່ ດັ່ງນີ້:

໑.

1. ຄົ້ນຄວ້າສ້າງ ແລະ ປັບປຸງ ບັນດານິຕິກຳ ທີ່ກ່ຽວຂ້ອງກັບ ມາດຕະການຕອບໂຕ້ເຫດສຸກເສີນທາງລະບົບ ຄອມພິວເຕີ ແລະ ມາດຕະຖານການຮັກຄວາມປອດໄພທາງໄຊເບີ;
2. ຄົ້ນຄວ້າ ແລະ ສ້າງສູນກາງລະບົບເຝົ້າລະວັງຄວາມປອດໄພທາງໄຊເບີ (Cyber Security Operation Center);
3. ເຝົ້າລະວັງ ແລະ ວິເຄາະ ການຈໍລະຈອນຂໍ້ມູນ ຜ່ານລະບົບກວດຈັບໄພຄຸກຄາມທາງໄຊເບີ; ຄົ້ນຄວ້າ ສະເໜີ ອອກໃບອະນຸຍາດ ດ້ານຄວາມປອດໄພ ໃນການນຳໃຊ້ ບັນດາອຸປະກອນສື່ສານເອເລັກ ໂຕຣນິກ ທີ່ຈະນຳເຂົ້າ ສປປ ລາວ;
4. ປະເມີນມາດຕະຖານຄວາມປອດໄພ ຂອງລະບົບການບໍລິຫານຈັດການຂໍ້ມູນຂ່າວສານ Information Security Management System (ISMS);
5. ຕິດຕາມ, ກວດກາ ແລະ ລາຍງານ ຄວາມປອດໄພຂອງ Website, Email ແລະ e-office ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
6. ກວດຫາຊ່ອງໂຫວ່, ວິເຄາະ ແລະ ປະເມີນຄວາມສ່ຽງ ເວັບໄຊ, ເມວເຊີເວີ ແລະ ລະບົບປະຕິບັດການ ເພື່ອດຳເນີນການແກ້ໄຂ;
7. ຮັບແຈ້ງເຫດ, ແຈ້ງເຕືອນ ແລະ ດຳເນີນການແກ້ໄຂ ກ່ຽວກັບ ໄພຄຸກຄາມທາງໄຊເບີ;
8. ກວດຫາຊ່ອງໂຫວ່, ວິເຄາະ ແລະ ປະເມີນຄວາມສ່ຽງ ເວັບໄຊ, ເມວເຊີເວີ ແລະ ລະບົບປະຕິບັດການ ເພື່ອດຳເນີນການແກ້ໄຂ;
9. ຄົ້ນຫາ, ສະໜອງ ແລະ ຢັ້ງຢືນຂໍ້ມູນຫຼັກຖານ ການກະທຳຜິດທາງໄຊເບີ ໃຫ້ເຈົ້າໜ້າທີ່ ຕຳຫຼວດ ແລະ ພາກສ່ວນກ່ຽວຂ້ອງ ຕາມການສະເໜີ;
10. ສ້າງກິດຈະກຳ, ຝຶກອົບຮົມ ແລະ ການຝຶກຊ້ອມເຮັດຕົວຈິງ ວຽກງານຄວາມປອດໄພທາງໄຊເບີ; ໃຫ້ຄຳປຶກສາ, ແນະນຳ ວິທີການປ້ອງກັນ ແລະ ແກ້ໄຂບັນຫາ ດ້ານຄວາມປອດໄພທາງໄຊເບີ;
11. ພົວພັນປະສານງານ ກັບ ໜ່ວຍງານຮັກສາຄວາມປອດໄພ (CSIRT) ຢູ່ພາຍໃນ ແລະ ບັນດາສູນຮັກສາຄວາມປອດໄພ (CERT) ຕ່າງໆປະເທດ ໃນການແກ້ໄຂເຫດສຸກເສີນທາງໄຊເບີ;
12. ຄຸ້ມຄອງ, ບຳລຸງຮັກສາ ອຸປະກອນເຕັກນິກ, ຫ້ອງຝຶກອົບຮົມ ແລະ ລະບົບພື້ນຖານໂຄງລ່າງເຕັກນິກ ຂອງກົມ;
13. ສືບຕໍ່ນຳໃຊ້ ໂລໂກລາວເຊີດ ''LaoCERT'' ເຂົ້າໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານດ້ານຄວາມປອດໄພທາງໄຊເບີ;
14. ສັງລວມ ບັນດາໄພຄຸກຄາມທີ່ເກີດຂຶ້ນ ທາງໄຊເບີ ພາຍໃນປະເທດ ເພື່ອໃຫ້ ພະແນການທີ່ກ່ຽວຂ້ອງສ້າງເປັນປຶ້ມສະຖິຕິຂໍ້ມູນ ປະຈຳປີ;
15. ສະຫຼຸບການເຄື່ອນໄຫວວຽກງານຂອງພະແນກ ປະຈຳເດືອນ, ງວດ ແລະ ປີ;
16. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 11 ໜ້າທີ່ຂອງພະແນກ ວິໄຈຂໍ້ມູນຂ່າວສານ ຜ່ານອິນເຕີເນັດ** (Content Analysis Division)

ພະແນກ ວິໄຈຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ ເຄື່ອງມື, ລະບົບ ແລະ ມາດຕະການ ໃນການວິໄຈຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ໃຫ້ຖືກຕ້ອງ ຕາມ ກົດໝາຍ ແລະ ລະບຽບການ;



ອ.

2. ຄົ້ນຄວ້າ ສັງລວມ ແລະ ເກັບກຳບັນດາ ກົດໝາຍ, ດຳລັດ, ສົນທິສັນຍາ, ນະໂຍບາຍ, ຂໍ້ຕົກລົງ, ຄຳແນະນຳ, ກົດລະບຽບ ແລະ ນິຕິກຳຕ່າງໆ ພາຍໃນ ແລະ ສາກົນ ເພື່ອເປັນບ່ອນອີງໃນການປະສານງານຮ່ວມມື ໃນການປົກປ້ອງເດັກໃນການນຳໃຊ້ອິນເຕີເນັດໃຫ້ມີຄວາມປອດໄພ;

3. ຄົ້ນຄ້ວາ, ຮຽບຮຽງ ແລະ ປະກອບຂໍ້ມູນກ່ຽວກັບການປົກປ້ອງເດັກໃນການນຳໃຊ້ອິນເຕີເນັດໃຫ້ມີຄວາມປອດໄພ ເຂົ້າໃນປື້ມບົດຮຽນເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ຊັ້ນມັດທະຍົມຕອນຕົ້ນ-ຕອນປາຍ ແລະ ປື້ມຄູ່ມື ການປົກປ້ອງເດັກທາງອິນເຕີເນັດໃຫ້ມີຄວາມປອດໄພ;

4. ຕິດຕາມ , ກວດກາ ແລະ ລາຍງານ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ທີ່ຂັດກັບກົດໝາຍ ແລະ ລະບຽບການ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການແກ້ໄຂຕໍ່ໄປ;

5. ຕອບໂຕ້ ບັນດາຂ່າວ ທີ່ເປັນທາງສຽງບໍ່ດີໃນສັງຄົມ, ຂ່າວປອມ, ຂ່າວປິດເບືອນຄວາມຈິງ ແລະ ການສົ່ງຕໍ່ຂໍ້ມູນຂ່າວຜິດຕໍ່ກົດໝາຍ ແລະ ລະບຽບການ;

6. ຄົ້ນຫາ, ສະໜອງ ແລະ ຢັ້ງຢືນຂໍ້ມູນຫຼັກຖານການກະທຳຜິດ ຜ່ານອິນເຕີເນັດ ຕາມການສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

7. ສົມທົບ ກັບ ພະແນກທີ່ກ່ຽວຂ້ອງ ເພື່ອປະສານຫາ ຜູ້ໃຫ້ບໍລິການສື່ສັງຄົມອອນລາຍ ຢູ່ຕ່າງປະເທດ ໃນການແກ້ໄຂບັນຫາການກະທຳຜິດ ຜ່ານອິນເຕີເນັດ;

8. ປະສານສົມທົບກັບຂະແໜງ ປກຊ-ປກສ ເພື່ອແກ້ໄຂ ການກະທຳຜິດທີ່ເກີດຂຶ້ນ ຜ່ານອິນເຕີເນັດ;

9. ໃຫ້ຄຳປຶກສາ, ແນະນຳດ້ານເຕັກນິກ ແລະ ວິທີການແກ້ໄຂບັນຫາແກ່ຜູ້ຖືກເສຍຫາຍ ຜ່ານອິນເຕີເນັດ;

10. ສ້າງກິດຈະກຳ, ໂຄສະນາ ແລະ ພາບເຄື່ອນໄຫວ ເພື່ອສັງລວມຂໍ້ມູນຂ່າວສານ ແລະ ເຜີຍແຜ່ໃຫ້ຄວາມຮູ້ໃນການປົກປ້ອງເດັກທາງອິນເຕີເນັດໃຫ້ມີຄວາມປອດໄພ;

11. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງໂຄສະນາເຜີຍແຜ່ ແລະໃຫ້ຄວາມຮູ້ ກ່ຽວກັບ ການນຳໃຊ້ ສື່ສັງຄົມອອນລາຍ ຜ່ານການນຳສະເໜີຕົວຈິງ ຫຼື ຜ່ານທາງເວບໄຊ ເພື່ອໃຫ້ນຳໃຊ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

12. ສັງລວມ ບັນດາການກະທຳຜິດ ຜ່ານອິນເຕີເນັດ ພາຍໃນປະເທດ ເພື່ອໃຫ້ ພະແນການທີ່ກ່ຽວຂ້ອງສ້າງເປັນປື້ມສະຖິຕິຂໍ້ມູນ ປະຈຳປີ;

13. ເກັບກຳສະຖິຕິກ່ຽວກັບການນຳໃຊ້ອິນເຕີເນັດຂອງເດັກໃນແຕ່ລະໄລຍະ;

14. ປະສານສົມທົບ ກັບ ຄກມດ ຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ຄຊກມດ ໃນການຈັດຕັ້ງປະຕິບັດວຽກງານ ການປົກປ້ອງເດັກທາງອິນເຕີເນັດໃຫ້ມີຄວາມປອດໄພ;

15. ສະຫຼຸບການຈັດຕັ້ງປະຕິບັດວຽກງານ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ (ຄຄອຊ) ໃນຂົງ ເຂດວຽກງານຂອງກົມຄວາມປອດໄພໄຊເບີ ປະຈຳ 06 ເດືອນ ແລະ ປະຈຳປີ;

16. ສະຫຼຸບການເຄື່ອນໄຫວວຽກງານຂອງພະແນກ ປະຈຳເດືອນ, ງວດ ແລະ ປີ;

17. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 12 ຫຼັກການ**

ກົມຄວາມປອດໄພໄຊເບີ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງ ພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 05 ປີ ຂອງກະຊວງ, ອີງການທຽບເທົ່າກະຊວງ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ;

**ມາດຕາ 13 ແບບແຜນວິທີເຮັດວຽກ**

ກົມຄວາມປອດໄພໄຊເບີ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກແຜນງານ, ແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານສົມທົບຢ່າງແໜ້ນແຟ້ນ ກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາ ຜົນໄດ້ຜົນເສຍ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ກະຊວງ ເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 14 ງົບປະມານ ແລະ ຕາປະທັບ**

ກົມຄວາມປອດໄພໄຊເບີ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານ ທາງລັດຖະການ.

**ມາດຕາ 15 ການຈັດຕັ້ງປະຕິບັດ**

ບັນດາການຈັດຕັ້ງ ທີ່ຂຶ້ນກັບ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງສະບັບເລກທີ 3203/ປທສ, ລົງວັນທີ 11 ທັນວາ 2018.

ລັດຖະມົນຕີ

ກະຊວງເຕັກໂນໂລຊີ ແລະ ການ... ລັດຖະມົນຕີ

ບໍ່ວຽງຄຳ ວົງດາລາ

ອ.